ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ
ຄະນະປະຈຳ

ເລກທີ 162 /ຄປຈ
ນະຄອນຫຼວງວຽງຈັນ, ວັນທີ 30 / 05 /25

# ມະຕິ

## ຂອງຄະນະປະຈຳສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາການປັບປຸງເນື້ອໃນມາດຕາ 34 ແລະ ມາດຕາ 38
## ຂອງກົດໝາຍວ່າດ້ວຍການປະກັນສັງຄົມ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມິນາ ປີ 2025;
- ອີງຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021 ມາດຕາ 66 ລັດຖະບັນຍັດ ແລະ ມາດຕາ 68 ການສ້າງລັດຖະບັນຍັດ;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 33 ຂໍ້ 1;
- ອີງຕາມໜັງສືສະເໜີຂອງລັດຖະບານກ່ຽວກັບການສະເໜີປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບເລກທີ 71/ລບ, ລົງວັນທີ 22 ພຶດສະພາ 2025.

ກອງປະຊຸມວິສາມັນຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 30 ພຶດສະພາ 2025 ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບການປັບປຸງເນື້ອໃນມາດຕາ 34 ແລະ ມາດຕາ 38 ຂອງກົດໝາຍວ່າດ້ວຍການປະກັນສັງຄົມ.

**ຄະນະປະຈຳສະພາແຫ່ງຊາດ ຕົກລົງ:**

**ມາດຕາ 1 ເຫັນດີຮັບຮອງເອົາການປັບປຸງເນື້ອໃນມາດຕາ 34 ແລະ ມາດຕາ 38 ຂອງກົດໝາຍວ່າດ້ວຍການປະກັນສັງຄົມ:**

1. ມາດຕາ 34 ເງື່ອນໄຂຮັບການອຸດໜູນບຳນານ

ຜູ້ທີ່ຮັບການອຸດໜູນບຳນານ ມີເງື່ອນໄຂ ດັ່ງນີ້:

1.1 ເພດຊາຍ ແລະ ເພດຍິງ ຕ້ອງມີປີການ ຊາວຫ້າປີ ຂຶ້ນໄປ ແລະ ມີອາຍຸກະສຽນ ຫ້າສິບເຈັດປີ ຫາ ຫົກສິບປີ ສຳລັບເພດຊາຍ, ຫ້າສິບຫ້າປີ ຫາ ຫົກສິບປີ ສຳລັບເພດຍິງ. ສຳລັບຜູ້ມີປີການ ຊາວສາມປີ ຂຶ້ນໄປ

ແຕ່ບໍ່ເຖິງ ຊາວຫ້າປີ ສາມາດຮັບອຸດໜູນບຳນານໄດ້ ແຕ່ໃຫ້ຫຼຸດອັດຕາສ່ວນຮ້ອຍອຸດໜູນບຳນານລົງ ໜຶ່ງສ່ວນຮ້ອຍ (1%) ຕໍ່ ໜຶ່ງປີການທີ່ຫຼຸດ;

ສຳລັບອາຍຸກະສຽນ ແລະ ປີການຂອງທະຫານ, ຕຳຫຼວດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ.

1.2 ເຂົ້າການປະຕິວັດກ່ອນປີ 1975, ເສຍກຳລັງແຮງງານປະເພດ ໜຶ່ງ ຫາ ສີ່, ເຮັດວຽກກັບທາດເບື່ອ, ເຄມີ ແລະ ສານພິດທີ່ເປັນອັນຕະລາຍຕໍ່ສຸຂະພາບແຕ່ ຫ້າປີ ຂຶ້ນໄປ ຕາມການຢັ້ງຢືນທາງການແພດ, ມີອາຍຸກະສຽນ ຫ້າສິບຫ້າປີ ຂຶ້ນໄປ ສຳລັບເພດຊາຍ, ຫ້າສິບປີ ຂຶ້ນໄປ ສຳລັບເພດຍິງ ແລະ ມີປີການແຕ່ ຊາວປີ ຂຶ້ນໄປ ໃຫ້ຈັດເຂົ້າຢູ່ໃນກຸ່ມຜູ້ຮັບບຳນານ ໄລຍະທີສາມ;

1.3 ເຮັດວຽກໃນລະບອບເກົ່າກ່ອນປີ 1975 ໃຫ້ຄິດໄລ່ປີການ ສາມປີໃດ ເທົ່າກັບ ໜຶ່ງປີການ ແລະ ໃຫ້ຈັດເຂົ້າເປັນ ໄລຍະທີສອງ;

1.4 ມີການຢັ້ງຢືນພັກຮັບບຳນານຢ່າງຖືກຕ້ອງ ຈາກຂະແໜງການທີ່ກ່ຽວຂ້ອງ.

**2. ມາດຕາ 38 ການຄິດໄລ່ເງິນອຸດໜູນເທື່ອດຽວ**

ຜູ້ບໍ່ຄົບເງື່ອນໄຂຮັບການອຸດໜູນບຳນານ ຈະໄດ້ຮັບເງິນອຸດໜູນເທື່ອດຽວ ຊຶ່ງຄິດໄລ່ເທົ່າກັບ ແປດສິບຫ້າສ່ວນຮ້ອຍ (85%) ຂອງເງິນປະກັນຕົນເດືອນສຸດທ້າຍ ຄູນໜຶ່ງເດືອນເຄິ່ງ ແລະ ຄູນ ໃຫ້ຈຳນວນປີການຂອງຜູ້ກ່ຽວ.

**ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.**

**ຄະນະປະຈຳສະພາແຫ່ງຊາດ**

**ປະທານ**

ປອ ໄຊສົມພອນ ພົມວິຫານ